PEFC/01-00-01

PEFC ST 1002:2018

# ຂໍ້ກຳນົດການຄຸ້ມຄອງປ່າໄມ້ແບບກຸ່ມ

# Group Forest Management-Requirements



ມາດຕະຖານ
ແມ່ແບບ
PEFC

ສະພາບໍລິຫານ PEFC

ICC Building C1
Route de Pré-Bois 20
1215 Geneva 15
Switzerland

**t** +41 22 799 45 40
**f** +41 22 799 45 50
**e** info@pefc.org
www.pefc.org

ສະຫງວນລິຂະສິດ

© PEFC Council 2018

ມາດຕະຖານນີ້ ແມ່ນໄດ້ຮັບການສະຫງວນລິຂະສິດໂດຍສະພາບໍລິຫານ PEFC. ເອກະສານນີ້ສາມາດສະເໜີຂໍ ແລະ ຊອກ ຄົ້ນ ໄດ້ທີ່ເວັບໄຊ: website www.pefc.org ຂອງສະພາບໍລິຫານ PEFC ໂດຍບໍ່ໄດ້ເສຍຄ່າ.

ຫ້າມປ່ຽນແປງ ຫຼື ແກ້ໄຂສ່ວນໃດສ່ວນໜຶ່ງຂອງເອກະສານທີ່ສະຫງວນລິຂະສິດ; ການຜະລິດຄືນໃໝ່ ຫຼື ສຳເນົາໃນຮູບ ແບບຕ່າງໆ ຫຼື ດ້ວຍວິທີການໃດໜຶ່ງເພື່ອຈຸດປະສົງທາງການຄ້າ ໂດຍບໍ່ໄດ້ຮັບອະນຸຍາດຈາກສະພາບໍລິຫານ PEFC.

ເອກະສານຕົ້ນສະບັບແມ່ນເຮັດເປັນພາສາອັງກິດ. ສາມາດຮັບຄຳແປເອກະສານໄດ້ຈາກສະພາບໍລິຫານ PEFC ຫຼື ອົງການ ຄຸ້ມ ຄອງແຫ່ງຊາດຂອງ PEFC. ເມື່ອມີຂໍ້ຄວາມບໍ່ຈະແຈ້ງກ່ຽວກັບການຕີຄວາມຫມາຍພາສາ, ໃຫ້ຖືເອົາສະບັບພາສາອັງກິດ ເປັນ ບ່ອນເອກະສານອ້າງອີງ.

ຊື່ເອກະສານ: ຂໍ້ກຳນົດການຍັ້ງຢືນການຄຸ້ມຄອງປ່າໄມ້ແບບກຸ່ມ

ຫົວຂໍ້ເອກະສານ: PEFC ST 1002:2018

ອະນຸມັດ ໂດຍ: ສະພາໃຫຍ່ PEFC　　　　ວັນທີ: 2018-11-14

ວັນທີອອກອະນຸຍາດ: 2018-11-28

ວັນທີມີຜົນບັງຄັບໃຊ້: 2018-11-28

# ສາລະບານ

ຄຳນຳ ............................................................ 4

ພາກສະເໜີ............................................................ 4

1. ຂອບເຂດ............................................................ 5

2. ເອກະສານອ້າງອີງ............................................................ 5

3. ຄຳສັບ ແລະ ນິຍາມ............................................................ 5

4. ບົດບາດ ແລະ ບໍລິບົດຂອງການຈັດຕັ້ງຂອງກຸ່ມ............................................................ 8

5. ພາລະບົດບາດ ແລະ ໜ້າທີ່............................................................ 9

6. ການວາງແຜນ ............................................................ 11

7. ການສະໜັບສະໜູນ ............................................................ 12

8. ການດຳເນີນງານ ............................................................ 13

9. ການຕີລາຄາປະເມີນຜົນການຈັດຕັ້ງປະຕິບັດ ............................................................ 13

10. ການປັບປຸງແກ້ໄຂ ............................................................ 17

ບັນນານຸກົມ ............................................................ 18

# ຄຳນຳ

ແຜນງານຮັບຮອງການຢັ້ງຢືນປ່າໄມ້ (Programme for the Endorsement of Forest Certification "PEFC") ແມ່ນອົງການສາກົນທີ່ສົ່ງເສີມການຄຸ້ມຄອງປ່າໄມ້ແບບຍືນຍົງ ໂດຍຜ່ານການຢັ້ງຢືນປ່າໄມ້ ແລະ ການຕິດສະຫຼາກຜະລິດຕະພັນປ່າໄມ້. ຜະລິດຕະພັນທີ່ມີການອ້າງສິດ ແລະ ຫຼື ຕິດສະຫຼາກ PEFC ຊ່ວຍຮັບປະກັນວ່າວັດຖຸດິບທີ່ໄດ້ນຳໃຊ້ເຂົ້າໃນການຜະລິດແມ່ນມາຈາກປ່າໄມ້ ແລະ ຕົ້ນໄມ້ນອກເຂດປ່າ (Trees Outside Forests) ທີ່ມີການຄຸ້ມຄອງຈັດສັນແບບຍືນຍົງ ແລະ ວັດສະດຸຖືກນຳມາໃຊ້ຄືນໃໝ່ຈາກແຫຼ່ງຄວບຄຸມຂອງ PEFC

ສະພາບໍລິຫານ PEFC ຮັບຮອງລະບົບການຢັ້ງຢືນປ່າໄມ້ລະດັບຊາດ ແລະ ພາກພື້ນທີ່ສອດຄ່ອງກັບຂໍ້ກຳນົດຂອງສະພາບໍລິຫານ PEFC. ບັນດາລະບົບຕ່າງໆແມ່ນຂຶ້ນກັບການປະເມີນຜົນຢ່າງເປັນປົກກະຕິ.

ເອກະສານນີ້ໄດ້ຮັບການພັດທະນາໂດຍນຳໃຊ້ຂະບວນການຢ່າງເປີດກວ້າງ, ໂປ່ງໃສ, ໃຫ້ການປຶກສາຫາລື ແລະ ຄວາມເປັນເອກະພາບ ແລະ ການມີສ່ວນຮ່ວມຢ່າງກວ້າງຂວາງຂອງບັນດາພາກສ່ວນທີ່ກ່ຽວຂ້ອງ.

PEFC ມີຄວາມມຸ່ງໝັ້ນໃນການປະຕິບັດຕາມມາດຕະຖານ ແລະ ຂັ້ນຕອນຕ່າງໆທີ່ໄດ້ຖືກພັດທະນາຂຶ້ນໂດຍອົງການມາດຕະຖານສາກົນ (ISO) ແລະ ສະພາການຮັບຮອງສາກົນ (The International Accreditation Forum "IAF").

PEFC ສະໜັບສະໜູນຄວາມສະເໝີພາບລະຫວ່າງຍິງ-ຊາຍ. ດັ່ງນັ້ນ, ທຸກໆຄຳສັບໃນມາດຕະຖານນີ້ທີ່ອ້າງເຖິງ ບຸກຄົນໃດໜຶ່ງສະເພາະ (ເຊັ່ນ: ຜູ້ຈັດການ, ເຈົ້າຂອງ, ຜູ້ເຂົ້າຮ່ວມ) ຈຶ່ງກວມເອົາທັງແມ່ຍິງ ແລະ ຜູ້ຊາຍເຊັ່ນດຽວກັນ, ໂດຍບໍ່ມີການເນັ້ນໜັກຕື່ມອີກ.

ເອກະສານສະບັບນີ້ ນຳໃຊ້ຍົກເລີກ ແລະ ປ່ຽນແທນຂໍ້ກຳນົດການຢັ້ງຢືນການຄຸ້ມຄອງປ່າໄມ້ແບບກຸ່ມຂອງ PEFC ສະບັບປີ 2010 (PEFC ST 1002:2010).

# ພາກສະເໜີ

PEFC ຮັບຮອງລະບົບການຢັ້ງຢືນປ່າໄມ້ລະດັບຊາດ ແລະ ພາກພື້ນ ເພື່ອການຄຸ້ມຄອງປ່າໄມ້ແບບຍືນຍົງ ບົນພື້ນຖານສະພາບປ່າໄມ້ຂອງແຕ່ລະປະເທດ ແລະ ພາກພື້ນ ທີ່ແຕກຕ່າງກັນທາງດ້ານ ນິເວດວິທະຍາ, ສັງຄົມ, ເສດຖະກິດ ແລະ ປະຫວັດສາດ. PEFC ສ່ອງແສງໃຫ້ເຫັນຄວາມເປັນຈິງ ໂດຍການສັງລວມເອົາລະບົບ ແລະ ມາດຕະຖານການຢັ້ງຢືນປ່າໄມ້ແຫ່ງຊາດ ແລະ ພາກພື້ນ ທີ່ເໝາະສົມກັບສະພາບການສະເພາະໃນທ້ອງຖິ່ນຕ່າງໆ.

ການຖືຄອງປ່າໄມ້ໃນຫຼາຍປະເທດ ແມ່ນມີລັກສະນະສະເພາະແຕກຕ່າງກັນໄປ ສ່ວນໃຫຍ່ ເປັນພື້ນທີ່ຂະໜາດນ້ອຍ ຊຶ່ງປະຊາຊົນທີ່ເປັນເຈົ້າຂອງ ຫລື ຜູ້ຄຸ້ມຄອງປ່າໄມ້ຂະໜາດນ້ອຍດັ່ງກ່າວ ມີຄວາມອາດສາມາດ ແລະ ຊັບພະຍາກອນທີ່ຈຳກັດ ຖືເປັນອຸປະສັກຕົ້ນຕໍ ຕໍ່ການຢັ້ງຢືນປ່າໄມ້ ລວມເຖິງບັນດາປັດໄຈຕ່າງໆ ທີ່ບໍ່ຈຳກັດແຕ່ສະເພາະໄລຍະເວລາໃນການຈັດຕັ້ງປະຕິບັດກິດຈະກຳການຄຸ້ມຄອງປ່າໄມ້ ແລະ ລາຍຮັບຂອງເຂົາເຈົ້າ ເທົ່ານັ້ນ ຍັງມີຄວາມບໍ່ເອົາໃຈໃສ່ ຫລື ຖືເບົາໃນການດຳເນີນງານ, ການເຂົ້າເຖິງຂໍ້ມູນຂ່າວສານ ແລະ ການສະໜັບສະໜູນທາງດ້ານເຕັກນິກວິທະຍາການທີ່ຈຳກັດ ເນື່ອງຈາກ ຄວາມຮູ້ຄວາມສາມາດຂອງບຸກຄົນ ແລະ ກຸ່ມຄົນ ແມ່ນມີຈຳກັດ ໃນການເຂົ້າເຖິງ ແລະ ການມີສ່ວນຮ່ວມຂອງການຖືຄອງພື້ນທີ່ຂະໜາດນ້ອຍ ແລະ ຄວາມເປັນເຈົ້າຂອງໃນການຢັ້ງຢືນການຄຸ້ມຄອງປ່າໄມ້.

ການຢັ້ງຢືນປ່າໄມ້ແບບກຸ່ມເປັນທາງເລືອກໃນການຢັ້ງຢືນສ່ວນບຸກຄົນ ຊຶ່ງເຮັດໃຫ້ເຈົ້າຂອງປ່າໄມ້ ແລະ ຜູ້ຈັດການປ່າໄມ້ ໄດ້ຮັບການຢັ້ງຢືນດ້ວຍຄວາມສະໝັກໃຈພາຍໃຕ້ໃບຢັ້ງຢືນດຽວ ແລະ ແບ່ງປັນພັນທະທາງດ້ານການເງິນທີ່ເກີດຈາກການຢັ້ງຢືນປ່າໄມ້ເຊັ່ນດຽວກັບຄວາມຮັບຜິດຊອບຮ່ວມກັນໃນການຄຸ້ມຄອງປ່າໄມ້. ວິທີການດັ່ງກ່າວນີ້ ແນ່ໃສ່ປັບປຸງການເຜີຍແຜ່ຂໍ້ມູນຂ່າວສານ ແລະ ການຮ່ວມມືໃນການຄຸ້ມຄອງປ່າໄມ້ລະຫວ່າງເຈົ້າຂອງ ແລະ ຜູ້ຈັດການປ່າໄມ້ສ່ວນບຸກຄົນ.

ຂໍ້ຈຳກັດກ່ຽວກັບການຢັ້ງຢືນປ່າໄມ້ສ່ວນບຸກຄົນ ແລະ ຂັ້ນຕອນທີ່ໄດ້ມາໃນການຢັ້ງຢືນແບບກຸ່ມ ບໍ່ໄດ້ນຳໄປສູ່ການປະຕິບັດຕາມຂໍ້ກຳນົດຂອງ PEFC ສຳລັບການຄຸ້ມຄອງປ່າໄມ້ແບບຍືນຍົງໃນລະດັບທີ່ຕ່ຳກວ່າ.

ມາດຕະຖານນີ້ ຖືກອອກແບບມາເພື່ອໃຫ້ເຈົ້າຂອງ ຫຼື ຜູ້ຈັດການໜ່ວຍງານການຄຸ້ມຄອງປ່າໄມ້ຂັ້ນຕ່າງໆ ມີສ່ວນຮ່ວມໃນການຢັ້ງຢືນ.

## 1. ຂອບເຂດ

ເອກະສານສະບັບນີ້ລະບຸຂໍ້ກຳນົດສຳລັບລະບົບການຢັ້ງຢືນປ່າໄມ້ລະດັບຊາດ ຫຼື ຂະແໜງການຂັ້ນສູນກາງ ແລະ ພາກພື້ນ, ຊຶ່ງລວມມີການຢັ້ງຢືນການຄຸ້ມຄອງປ່າໄມ້ແບບກຸ່ມ ແລະ ອະນຸຍາດໃຫ້ມີການຢັ້ງຢືນເຈົ້າຂອງ ຫຼື ຜູ້ຈັດການປ່າໄມ້ແບບຫຼາຍຄົນ ພາຍໃຕ້ໃບຢັ້ງຢືນດຽວກັນ.

ການຢັ້ງຢືນການຄຸ້ມຄອງປ່າໄມ້ແບບກຸ່ມ ຈຳເປັນຕ້ອງມີການສ້າງໜ່ວຍງານການຄຸ້ມຄອງສະເພາະ ຊຶ່ງລວມມີເຈົ້າຂອງ ຫຼື ຜູ້ຈັດການປ່າໄມ້ແຕ່ລະຄົນ. ໜ່ວຍງານນີ້ ເປັນຕົວແທນໃຫ້ເຈົ້າຂອງ ຫຼື ຜູ້ຈັດການສ່ວນບຸກຄົນໃນການຢັ້ງຢືນປ່າໄມ້ ເພື່ອຮັບປະກັນການປະຕິບັດ ທີ່ຖືກຕ້ອງຕາມມາດຕະຖານການຄຸ້ມຄອງປ່າໄມ້ແບບຍືນຍົງ ແລະ ສ້າງຄວາມໝັ້ນໃຈໃນກິດຈະກຳການຢັ້ງຢືນຕາມການສຸ່ມຕົວຢ່າງ.

ຂໍ້ກຳນົດທີ່ລະບຸໄວ້ໃນເອກະສານສະບັບນີ້ສ່ອງແສງເຖິງແມ່ແບບມາດຕະຖານສາກົນຂອງ PEFC ສຳລັບການຢັ້ງຢືນປ່າໄມ້ແບບກຸ່ມ. ມາດຕະຖານນີ້ຈະຖືກປະຕິບັດໂດຍມາດຕະຖານການຢັ້ງຢືນປ່າໄມ້ແບບກຸ່ມ ທີ່ຖືກສົ່ງມາເພື່ອການຮັບຮອງ PEFC. ເປັນຂໍ້ກຳນົດສຳລັບ ໜ່ວຍງານກຸ່ມ ທີ່ສະໝັກຂໍເອົາການຢັ້ງຢືນແບບກຸ່ມ.

## 2. ເອກະສານອ້າງອີງ

LFCS/PEFC ST 1003:2025, ບັນດາຂໍ້ກຳນົດການຄຸ້ມຄອງປ່າໄມ້ແບບຍືນຍົງ

## 3. ຄຳສັບ ແລະ ນິຍາມ

ສຳລັບຈຸດປະສົງຂອງເອກະສານທາງຄຳສັບ ແລະ ນິຍາມນີ້, ທີ່ກຳນົດໄວ້ໃນ ISO / IEC ຄູ່ມື 2 ນຳໃຊ້ຮ່ວມກັນກັບຄຳນິຍາມດັ່ງຕໍ່ໄປນີ້.

### 3.1 ຜູ້ມີສ່ວນຮ່ວມທີ່ໄດ້ຮັບຜົນກະທົບ

ຜູ້ມີສ່ວນຮ່ວມທີ່ໄດ້ຮັບຜົນກະທົບ ແມ່ນບຸກຄົນທີ່ອາດຈະປະສົບການກ່ຽວກັບການປ່ຽນແປງໂດຍກົງໃນຊີວິດ ແລະ ຫຼື ສະພາບການເຮັດວຽກທີ່ເກີດຈາກກິດຈະກຳ ຂອງການຈັດຕັ້ງກຸ່ມ.

ໝາຍເຫດ 1: ຜູ້ມີສ່ວນຮ່ວມ ລວມມີຊຸມຊົນໃກ້ຄຽງ, ຊົນເຜົ່າພື້ນເມືອງ, ກຳມະກອນ ແລະ ອື່ນໆ. ແນວໃດກໍ່ຕາມ, ພາກສ່ວນທີ່ມີຄວາມສົນໃຈໃນເລື່ອງມາດຕະຖານ ເຊັ່ນ: ອົງການບໍ່ສັງກັດລັດຖະບານ, ຂະແໜງວິທະຍາສາດ ແລະ ປະຊາຊົນ ແມ່ນບໍ່ຖືວ່າຜູ້ມີສ່ວນຮ່ວມ.

ໝາຍເຫດ 2: ຜູ້ມີສ່ວນຮ່ວມ ທີ່ອາດຈະເປັນຜູ້ໃຊ້ມາດຕະຖານ ມີແນວໂນ້ມທີ່ຈະກາຍເປັນໜ່ວຍງານຢັ້ງຢືນ, ຍົກຕົວຢ່າງ: ໃນກໍລະນີ ທີ່ເຈົ້າຂອງປ່າໄມ້ ປະຕິບັດຕາມມາດຕະຖານການຄຸ້ມຄອງຈັດສັນປ່າໄມ້ ຫຼື ໃນກໍລະນີ ທີ່ວິສາຫະກິດປຸງແຕ່ງໄມ້ ປະຕິບັດຕາມມາດຕະຖານຕ່ອງໂສ້ການຄວບຄຸມ.

### 3.2 ການກວດສອບ

ແມ່ນຂະບວນການສ້າງເອກະສານຫຼັກຖານທີ່ເປັນລະບົບຢ່າງມີອິດສະຫຼະ ເພື່ອໃຫ້ເກີດມີການບັນທຶກ, ລາຍງານຄວາມເປັນຈິງ ຫຼື ຂໍ້ມູນທີ່ກ່ຽວຂ້ອງອື່ນໆ ແລະ ປະເມີນຢ່າງເປັນກາງ ເພື່ອກຳນົດຂອບເຂດ ໃຫ້ບັນລຸຜົນຕາມຂໍ້ກຳນົດທີ່ວາງໄວ້.

### 3.3 ພື້ນທີ່ຢັ້ງຢືນ

ແມ່ນພື້ນທີ່ປ່າໄມ້ ທີ່ນອນຢູ່ພາຍໃຕ້ລະບົບການຄຸ້ມຄອງປ່າໄມ້ແບບຍືນຍົງ ທີ່ອີງຕາມມາດຕະຖານການຄຸ້ມຄອງປ່າໄມ້ແບບຍືນຍົງຂອງ PEFC (PEFC ST 1003).

ໃນສະຖານະພາບການຢັ້ງຢືນແບບກຸ່ມ, ພື້ນທີ່ທີ່ໄດ້ຮັບການຢັ້ງຢືນແມ່ນຜົນລວມຂອງພື້ນທີ່ປ່າໄມ້ຂອງຜູ້ເຂົ້າຮ່ວມ ແລະ ນອນຢູ່ພາຍໃຕ້ໃບຢັ້ງຢືນປ່າໄມ້ແບບກຸ່ມ.

### 3.4 ຂໍ້ມູນບັນທຶກ

ຂໍ້ມູນທີ່ຈຳເປັນຕ້ອງໄດ້ຮັບການຄວບຄຸມ ແລະ ບຳລຸງຮັກສາໂດຍອົງການຈັດຕັ້ງ ດ້ວຍການນຳໃຊ້ໂຄງຮ່າງ ຫຼື ແບບ ແລະ ສື່ມວນຊົນຈາກແຫຼ່ງຂໍ້ມູນໃດໜຶ່ງ.

### 3.5 ເອກະສານຢັ້ງຢືນການເຂົ້າຮ່ວມການຢັ້ງຢືນປ່າໄມ້ແບບກຸ່ມ

ແມ່ນເອກະສານທີ່ອອກອະນຸຍາດໃຫ້ແກ່ຜູ້ເຂົ້າຮ່ວມທີ່ອ້າງເຖິງໃບຢັ້ງຢືນປ່າໄມ້ແບບກຸ່ມ ແລະ ທີ່ຢືນຢັນເຖິງ ຜູ້ເຂົ້າຮ່ວມວ່າໄດ້ຢູ່ພາຍໃຕ້ ຂອບເຂດຂອງການຢັ້ງຢືນປ່າໄມ້ແບບກຸ່ມ.

*ໝາຍເຫດ:* ເອກະສານນີ້ອາດຈະເປັນຕົວຢ່າງໃບຢັ້ງຢືນຍ່ອຍ ຫຼື ການຢືນຢັນການເຂົ້າຮ່ວມ.

### 3.6 ເຈົ້າຂອງ ຫຼື ຜູ້ຈັດການປ່າໄມ້

ແມ່ນບຸກຄົນ, ກຸ່ມ ຫຼື ນິຕິບຸກຄົນທີ່ມີສິດຕາມກົດໝາຍ ຫຼື ສິດຄອບຄອງນໍາໃຊ້ ຫຼື ປະຕິບັດສິດຄອບຄອງນໍາໃຊ້ແບບດັ້ງເດີມ ຫຼື ຕາມຮີດຄອງປະເພນີ ເພື່ອຄຸ້ມຄອງປ່າໄມ້ໃນພື້ນທີ່ ໄດ້ຮັບການຢັ້ງຢືນທີ່ກໍານົດໄວ້ຢ່າງຈະແຈ້ງ ແລະ ຄວາມສາມາດໃນການຈັດຕັ້ງປະຕິບັດຕາມຂໍ້ກໍານົດຂອງມາດຕະຖານການຄຸ້ມຄອງປ່າໄມ້ແບບຍືນຍົງໃນພື້ນທີ່.

### 3.7 ໜ່ວຍງານກຸ່ມ

ໜ່ວຍງານກຸ່ມ ເປັນຕົວແທນຂອງຜູ້ເຂົ້າຮ່ວມ ໂດຍມີຄວາມຮັບຜິດຊອບລວມໃນການກວດສອບຄວາມສອດຄ່ອງຂອງການຄຸ້ມຄອງຈັດສັນປ່າໄມ້ໃນເຂດທີ່ໄດ້ຮັບການຢັ້ງຢືນຕາມມາດຕະຖານການຄຸ້ມຄອງປ່າໄມ້ແບບຍືນຍົງ ແລະ ຂໍ້ກໍານົດອື່ນໆທີ່ກ່ຽວຂ້ອງ ຂອງລະບົບການຢັ້ງຢືນປ່າໄມ້. ສໍາລັບຈຸດປະສົງນີ້, ໜ່ວຍງານກຸ່ມກໍາລັງໃຊ້ລະບົບການຄຸ້ມຄອງກຸ່ມ.

ໝາຍເຫດ: ໂຄງສ້າງຂອງໜ່ວຍງານກຸ່ມ ຄວນປະຕິບັດຕາມແຜນດໍາເນີນງານ, ຈໍານວນຜູ້ເຂົ້າຮ່ວມ ແລະ ເງື່ອນໄຂພື້ນຖານ ອື່ນໆ ສໍາລັບການຈັດຕັ້ງກຸ່ມ ຊຶ່ງມັນອາດຈະແມ່ນບຸກຄົນໃດໜຶ່ງເປັນຕົວແທນ.

### 3.8 ໃບຢັ້ງຢືນປ່າໄມ້ແບບກຸ່ມ

ແມ່ນເອກະສານຢັ້ງຢືນ ກ່ຽວກັບການຈັດຕັ້ງກຸ່ມ ທີ່ປະຕິບັດຕາມຂໍ້ກໍານົດຂອງມາດຕະຖານການຄຸ້ມຄອງປ່າໄມ້ແບບຍືນຍົງ ແລະ ຂໍ້ກໍານົດ ອື່ນໆທີ່ກ່ຽວຂ້ອງຂອງລະບົບການຢັ້ງຢືນປ່າໄມ້.

### 3.9 ການຢັ້ງຢືນປ່າໄມ້ແບບກຸ່ມ

ແມ່ນການຢັ້ງຢືນການຈັດຕັ້ງກຸ່ມພາຍໃຕ້ໃບຢັ້ງຢືນປ່າໄມ້ແບບກຸ່ມອັນດຽວ.

### 3.10 ແຜນການຄຸ້ມຄອງກຸ່ມ

ແມ່ນຂໍ້ມູນເອກະສານ ທີ່ມີການກໍານົດຈຸດປະສົງ, ແຜນວຽກ ແລະ ການກະກຽມໃນການຄວບຄຸມ, ຊຶ່ງເປັນຂໍ້ມູນປະກອບດ້ວຍການປ່ຽນແປງທີ່ໄດ້ວາງແຜນໄວ້ຂອງລະບົບການຄຸ້ມຄອງກຸ່ມ ແລະ ຂໍ້ກໍານົດຂອງມາດຕະຖານການຄຸ້ມຄອງປ່າໄມ້ແບບຍືນຍົງ ຊຶ່ງກວມເອົາໃນລະດັບກຸ່ມ ເທົ່ານັ້ນ.

### 3.11 ລະບົບການຄຸ້ມຄອງກຸ່ມ

ແມ່ນຊຸດຂອງອົງປະກອບທີ່ມີຄວາມເຊື່ອມໂຍງ ຫຼື ປະຕິສໍາພັນລະຫວ່າງກັນໃນອົງກອນເພື່ອບັນລຸຈຸດປະສົງ ແລະ ຜົນສໍາເລັດຂອງມາດຕະຖານການຄຸ້ມຄອງປ່າໄມ້ແບບຍືນຍົງ.

### 3.12 ການຈັດຕັ້ງກຸ່ມ

ກຸ່ມຂອງຜູ້ເຂົ້າຮ່ວມທີ່ຖືກແທນດ້ວຍໜ່ວຍງານກຸ່ມ ເພື່ອຈຸດປະສົງໃນການຈັດຕັ້ງປະຕິບັດມາດຕະຖານການຄຸ້ມຄອງປ່າໄມ້ແບບຍືນຍົງ ແລະ ການໄດ້ຮັບໃບຢັ້ງຢືນ. ຂໍ້ຕົກລົງທີ່ເປັນລາຍລັກອັກສອນ ຈະຕ້ອງຖືກສ້າງຕັ້ງຂຶ້ນລະຫວ່າງຜູ້ເຂົ້າຮ່ວມ ແລະ ໜ່ວຍງານກຸ່ມ.

ຄໍາວ່າ "ການຈັດຕັ້ງກຸ່ມ" ມີຄວາມໝາຍເທົ່າກັບຄໍາວ່າ "ການຈັດຕັ້ງລະດັບພາກ" ຫລື ໂດຍຄໍາສັບອື່ນ ທີ່ຖືກເລືອກໂດຍແຜນງານການຢັ້ງຢືນປ່າໄມ້ຕາມຄວາມເໝາະສົມ ແລະ ຖືກຕ້ອງສອດຄ່ອງກັບເນື້ອໃນຄວາມໝາຍຂອງຄໍານິຍາມນີ້.

### 3.13 ການກວດສອບພາຍໃນ

ແມ່ນຂະບວນສ້າງສຳນວນເອກະສານທີ່ເປັນລະບົບ ມີຄວາມເປັນອິດສະຫຼະ ເພື່ອເກັບກຳເອກະສານ, ບົດລາຍງານຄວາມເປັນຈິງ ຫຼື ຂໍ້ມູນ ທີ່ກ່ຽວຂ້ອງອື່ນໆ ແລະ ປະເມີນຢ່າງເປັນກາງ ເພື່ອກຳນົດຂອບເຂດໃຫ້ບັນລຸຜົນຕາມຂໍ້ກຳນົດທີ່ວາງໄວ້, ຊຶ່ງດຳເນີນການປະຕິບັດໂດຍການຈັດຕັ້ງກຸ່ມເອງ (ການກວດສອບຕົ້ນສະບັບ).

### 3.14 ການຕິດຕາມ

ແມ່ນການກຳນົດສະຖານະພາບຂອງລະບົບ, ຂະບວນການ ຫຼື ກິດຈະກຳ.

### 3.15 ການຈັດຕັ້ງ

ແມ່ນບຸກຄົນ ຫຼື ກຸ່ມຄົນ ທີ່ມີໜ້າທີ່ຄວາມຮັບຜິດຊອບ, ອຳນາດໜ້າທີ່ ແລະ ຄວາມສຳພັນຕ່າງໆເພື່ອບັນລຸເປົ້າໝາຍຂອງຕົນເອງ.

### 3.16 ຜູ້ເຂົ້າຮ່ວມ

ແມ່ນເຈົ້າຂອງ/ຜູ້ຈັດການປ່າໄມ້ ທີ່ໄດ້ຮັບໃບຢັ້ງຢືນປ່າໄມ້ແບບກຸ່ມ, ຊຶ່ງມີຄວາມສາມາດໃນການປະຕິບັດຕາມຂໍ້ກຳນົດຂອງມາດຕະຖານການ ຄຸ້ມຄອງປ່າໄມ້ແບບຍືນຍົງໃນເຂດທີ່ໄດ້ຮັບການຢັ້ງຢືນ.

*ໝາຍເຫດ:* ຄຳວ່າ "ຄວາມສາມາດໃນການນຳໃຊ້ຂໍ້ກຳນົດຂອງມາດຕະຖານການຄຸ້ມຄອງປ່າໄມ້ແບບຍືນຍົງ" ຕ້ອງການໃຫ້ໜ່ວຍງານນັ້ນ ມີສິດທິຕາມກົດໝາຍ, ສິດຄອບຄອງນຳໃຊ້ ຫຼື ສິດຄອບຄອງນຳໃຊ້ແບບດັ້ງເດີມ ຫຼື ຕາມຮີດຄອງປະເພນີ ເພື່ອຄຸ້ມຄອງປ່າໄມ້ໃນໄລຍະຍາວ ແລະ ຈະເຮັດໃຫ້ຜູ້ຮັບຈ້າງແບບຄັ້ງດຽວ ບໍ່ມີສິດເຂົ້າຮ່ວມໃນການຮັບໃບຢັ້ງຢືນການຄຸ້ມຄອງປ່າໄມ້ແບບກຸ່ມ.

ໃນກໍລະນີທີ່ລະບົບລະດັບພາກພື້ນ ຫຼື ລະດັບຊາດ ອະນຸຍາດໃຫ້ຜູ້ຮັບເໝົາທີ່ບໍ່ມີສິດໃນການຄຸ້ມຄອງໄລຍະຍາວ ສຳລັບພື້ນທີ່ປ່າສະເພາະ ໃດໜຶ່ງເຂົ້າຮ່ວມໃນການຢັ້ງຢືນປ່າໄມ້ແບບກຸ່ມ, ລະບົບຈະຕ້ອງຮັບປະກັນວ່າຜູ້ຮັບເໝົາເຫຼົ່ານີ້ສາມາດອ້າງສິດ PEFC ໄດ້ສະເພາະວັດສະດຸທີ່ມາຈາກ ພື້ນທີ່ທີ່ໄດ້ຮັບການຢັ້ງຢືນຂອງຜູ້ເຂົ້າຮ່ວມ ຫຼື ເຈົ້າຂອງປ່າໄມ້ທີ່ໄດ້ຮັບການຢັ້ງຢືນສ່ວນບຸກຄົນເທົ່ານັ້ນ/ຜູ້ຈັດການທີ່ມີສິດຄຸ້ມຄອງທາງດ້ານກົດ ໝາຍ ຫຼື ວາລະດຳລົງຕຳແໜ່ງໃນໄລຍະຍາວ.

### 3.17 ນະໂຍບາຍ

ເຈົ້າຂອງ ຫຼື ຜູ້ຈັດການປ່າໄມ້ ຫຼື ໜ່ວຍງານກຸ່ມ ສະແດງຄວາມຕັ້ງໃຈ ແລະ ທິດທາງຂອງການຈັດຕັ້ງຢ່າງເປັນທາງການ.

### 3.18 ຜູ້ມີສ່ວນຮ່ວມ

ແມ່ນບຸກຄົນ, ກຸ່ມ, ຊຸມຊົນ ຫຼື ການຈັດຕັ້ງທີ່ມີຄວາມສົນໃຈໃນເລື່ອງຂອງຂໍ້ກຳນົດຂອງມາດຕະຖານ.

# 4. ບົດບາດ ແລະ ບໍລິບົດຂອງການຈັດຕັ້ງຂອງກຸ່ມ

## 4.1 ຄວາມເຂົ້າໃຈກ່ຽວກັບການຈັດຕັ້ງ ແລະ ບໍລິບົດຂອງກຸ່ມ

ມາດຕະຖານ ຈະຕ້ອງກຳນົດວິທີການໃນການກຳນົດບັນຫາພາຍນອກ ແລະ ພາຍໃນທີ່ມີຄວາມກ່ຽວຂ້ອງຂອງການຈັດຕັ້ງກຸ່ມ. ຕ້ອງມີການກຳນົດກອບໜ້າວຽກທົ່ວໄປ ສຳລັບການຈັດຕັ້ງກຸ່ມ:

ກ) ກຸ່ມລະດັບພາກ: ກຸ່ມຂອງເຈົ້າຂອງ ຫຼື ຜູ້ຈັດການປ່າໄມ້ ທີ່ກຳນົດໂດຍເສັ້ນແບ່ງເຂດແດນພາກ ແລະ

ຂ) ກຸ່ມອື່ນໆ ແລະ ຫຼື

ຄ) ບໍ່ວ່າຈະມີສະພາບການອື່ນໆທີ່ຈຳເປັນ ຫຼື ມີຜົນກະທົບຕໍ່ການນຳໃຊ້ລະບົບການຄຸ້ມຄອງກຸ່ມ.

## 4.2 ການເຂົ້າໃຈຄວາມຕ້ອງການ ແລະ ຄວາມຄາດຫວັງຂອງຜູ້ມີສ່ວນຮ່ວມທີ່ໄດ້ຮັບຜົນກະທົບ

**4.2.1** ມາດຕະຖານກຳນົດໃຫ້ການຈັດຕັ້ງກຸ່ມ ຕ້ອງກຳນົດ ດັ່ງນີ້:

ກ) ຜູ້ມີສ່ວນຮ່ວມທີ່ໄດ້ຮັບຜົນກະທົບທີ່ມີຄວາມກ່ຽວຂ້ອງກັບລະບົບການຄຸ້ມຄອງຂອງກຸ່ມ ແລະ

ຂ) ຄວາມຄາດຫວັງທີ່ມີຄວາມກ່ຽວຂ້ອງຂອງຜູ້ມີສ່ວນຮ່ວມທີ່ໄດ້ຮັບຜົນກະທົບເຫຼົ່ານີ້.

## 4.3 ການກຳນົດຂອບເຂດຂອງລະບົບການຄຸ້ມຄອງກຸ່ມ

**4.3.1** ມາດຕະຖານຈະຕ້ອງໃຫ້ນິຍາມທີ່ກ່ຽວຂ້ອງກັບຄຳສັບດັ່ງຕໍ່ໄປນີ້ ໂດຍສອດຄ່ອງກັບນິຍາມຂອງຂໍ້ຄຳສັບເຫຼົ່ານັ້ນ ທີ່ໄດ້ສະເໜີໄວ້ໃນບົດທີ 3:

ກ) ການຈັດຕັ້ງກຸ່ມ ແລະ ອົງປະກອບຂອງການຈັດຕັ້ງກຸ່ມ (ໜ່ວຍງານກຸ່ມ ແລະ ຜູ້ເຂົ້າຮ່ວມ),

ຂ) ເຂດພື້ນທີ່ຢັ້ງຢືນ,

ຄ) ໃບຢັ້ງຢືນກຸ່ມ ແລະ

ງ) ເອກະສານຢືນຢັນການມີສ່ວນຮ່ວມໃນການຢັ້ງຢືນກຸ່ມ.

**4.3.2** ມາດຕະຖານກຳນົດໃຫ້ມີການສ້າງຂອບເຂດຂອງລະບົບການຄຸ້ມຄອງກຸ່ມ ທີ່ຈຳເປັນຕ້ອງກຳນົດຂອບເຂດ ແລະ ຄວາມເໝາະສົມໃນການນຳໃຊ້ຂອງລະບົບດັ່ງກ່າວ.

**4.3.3** ມາດຕະຖານຈະຕ້ອງລະບຸວ່າຂໍ້ກຳນົດໃດໃນມາດຕະຖານການຄຸ້ມຄອງປ່າໄມ້ແບບຍືນຍົງ ທີ່ສາມາດປະຕິບັດໃຫ້ສຳເລັດຜົນໄດ້ໃນລະດັບກຸ່ມ.

**4.3.4** ມາດຕະຖານ ກຳນົດໃຫ້ຂອບເຂດ ຈະຕ້ອງຖືກເຜີຍແຜ່ໃນຮູບແບບເອກະສານຂໍ້ມູນ.

## 4.4 ລະບົບການຄຸ້ມຄອງກຸ່ມ

**4.4.1** ມາດຕະຖານກຳນົດໃຫ້ຜູ້ເຂົ້າຮ່ວມທັງໝົດຕ້ອງຢູ່ພາຍໃຕ້ການຕິດຕາມພາຍໃນ ແລະ ແຜນງານການກວດສອບພາຍໃນ.

**4.4.2** ມາດຕະຖານ ກຳນົດໃຫ້ຕ້ອງມີລະບົບຕ່ອງໂສ້ການຄວບຄຸມ PEFC ທີ່ໄດ້ຮັບການຢັ້ງຢືນ ຈະຕ້ອງມີຢູ່ ຖ້າຫາກໜ່ວຍງານກຸ່ມ ເຮັດໜ້າທີ່ເປັນຜູ້ຊື້ຂາຍວັດສະດຸທີ່ແຫຼ່ງທີ່ມາຈາກປ່າທີ່ບໍ່ໄດ້ຮັບການຄຸ້ມຄອງໂດຍໃບຢັ້ງຢືນກຸ່ມ.

# 5. ພາລະບົດບາດ ແລະ ໜ້າທີ່

## 5.1 ພາລະບົດບາດ, ຄວາມຮັບຜິດຊອບ ແລະ ອຳນາດໜ້າທີ່ຂອງການຈັດຕັ້ງ

### 5.1.1 ໜ້າທີ່ ແລະ ຄວາມຮັບຜິດຊອບຂອງໜ່ວຍງານກຸ່ມ

ມາດຕະຖານຮຽກຮ້ອງໃຫ້ກຳນົດຫນ້າທີ່ ແລະ ຄວາມຮັບຜິດຊອບຂອງໜ່ວຍງານກຸ່ມຕໍ່ໄປນີ້:

ກ) ເພື່ອຈັດຕັ້ງປະຕິບັດ ແລະ ບຳລຸງຮັກສາລະບົບການຄຸ້ມຄອງທີ່ມີປະສິດທິພາບ ຊຶ່ງກວມເອົາຜູ້ເຂົ້າຮ່ວມທັງໝົດຂອງກຸ່ມ;

ຂ) ເພື່ອເປັນຕົວແທນໃຫ້ແກ່ການຈັດຕັ້ງກຸ່ມໃນຂະບວນການຢັ້ງຢືນ ລວມທັງໃນການສື່ສານແລະຄວາມສຳພັນກັບໜ່ວຍງານ ການຢັ້ງຢືນ, ການຍື່ນສະເຫນີຄຳຮ້ອງສະຫມັກຂໍການຢັ້ງຢືນ ແລະ ຄວາມສຳພັນຕາມສັນຍາກັບໜ່ວຍງານການຢັ້ງຢືນ;

ຄ) ເພື່ອສ້າງຂັ້ນຕອນທີ່ເປັນລາຍລັກອັກສອນສຳລັບການຄຸ້ມຄອງການຈັດຕັ້ງຂອງກຸ່ມ;

ງ) ເພື່ອສ້າງຂັ້ນຕອນທີ່ເປັນລາຍລັກອັກສອນສຳລັບການຮັບເອົາຜູ້ເຂົ້າຮ່ວມໃຫມ່ຂອງການຈັດຕັ້ງຂອງກຸ່ມ. ຂັ້ນຕອນການຮັບເອົາເຫຼົ່ານີ້ ຢ່າງຫນ້ອຍຕ້ອງກວມເອົາການກວດສອບຂໍ້ມູນຂອງຜູ້ສະຫມັກກ່ຽວກັບລາຍລະອຽດການຕິດຕໍ່, ການລະບຸຊັບສິນປ່າ ແລະ / ຂະຫນາດຂອງເຂົາເຈົ້າທີ່ຊັດເຈນ;

ຈ) ເພື່ອສ້າງຂັ້ນຕອນທີ່ເປັນລາຍລັກອັກສອນສຳລັບການລະງັບ ແລະ ຍົກເວັ້ນຜູ້ເຂົ້າຮ່ວມທີ່ບໍ່ແກ້ໄຂ / ປິດສິ່ງທີ່ບໍ່ສອດຄ່ອງ ຕາມຂໍ້ກຳນົດ. ຜູ້ເຂົ້າຮ່ວມກຸ່ມທີ່ຖືກແຍກອອກຈາກກຸ່ມການຢັ້ງຢືນໃດໆ ເນື່ອງຈາກມີຄວາມບໍ່ສອດຄ່ອງຕາມຂໍ້ກຳນົດ ຈະບໍ່ສາມາດຖືກຍອມຮັບໄດ້ພາຍໃນ 12 ເດືອນຫຼັງຈາກຖືກຍົກເລີກ

ສ) ເພື່ອເກັບຮັກສາຂໍ້ມູນບັນທຶກຂອງ:

   i. ຄວາມສອດຄ່ອງຂອງໜ່ວຍງານກຸ່ມ ແລະ ຜູ້ເຂົ້າຮ່ວມກັບຂໍ້ກຳນົດຂອງມາດຕະຖານການຄຸ້ມຄອງ ຈັດສັນປ່າໄມ້ແບບຍືນຍົງ ແລະ ຂໍ້ກຳນົດອື່ນໆທີ່ກ່ຽວຂ້ອງຂອງລະບົບການຢັ້ງຢືນປ່າໄມ້,
   ii. ຜູ້ເຂົ້າຮ່ວມທັງຫມົດ ລວມທັງຂໍ້ມູນລາຍລະອຽດການຕິດຕໍ່, ການລະບຸຊັບສິນປ່າໄມ້ ແລະ ຂະຫນາດ,
   iii. ພື້ນທີ່ຢັ້ງຢືນ,
   iv. ການທົບທວນຄືນ ແລະ ການດຳເນີນການປ້ອງກັນ ແລະ / ຫຼື ການແກ້ໄຂ ກ່ຽວກັບການປະຕິບັດແຜນງານຕິດຕາມກວດກາພາຍໃນ

ຊ) ເພື່ອສ້າງສາຍສຳພັນກັບຜູ້ເຂົ້າຮ່ວມທັງຫມົດ ຕາມຂໍ້ຕົກລົງລາຍລັກອັກສອນທີ່ມີຜົນຜູກພັນ ຊຶ່ງຈະປະກອບມີຄຳ ຫມັ້ນສັນ ຍາຂອງຜູ້ເຂົ້າຮ່ວມທີ່ຈະປະຕິບັດຕາມມາດຕະຖານການຄຸ້ມຄອງປ່າໄມ້ແບບຍືນຍົງ. ໜ່ວຍງານກຸ່ມ ຈະຕ້ອງ ມີສັນຍາເປັນລາຍລັກອັກສອນ ຫຼື ຂໍ້ຕົກລົງທີ່ເປັນລາຍລັກອັກສອນອື່ນໆກັບຜູ້ເຂົ້າຮ່ວມທັງໝົດ ຊຶ່ງກວມເອົາສິດຂອງ ໜ່ວຍງານກຸ່ມ ໃນການປະຕິບັດ ແລະ ບັງຄັບໃຊ້ມາດຕະການແກ້ໄຂ ຫຼື ປ້ອງກັນ ແລະ ເພື່ອເລີ່ມຕົ້ນການແຍກຜູ້ ເຂົ້າຮ່ວມອອກຈາກຂອບເຂດການຢັ້ງຢືນໃນກໍລະນີທີ່ບໍ່ສອດຄ່ອງຕາມ ຂໍ້ກຳນົດຂອງມາດຕະຖານການຄຸ້ມຄອງປ່າໄມ້ແບບຍືນຍົງ;

*ໝາຍເຫດ:* ຂໍ້ກຳນົດ ສຳລັບ "ຄຳຫມັ້ນສັນຍາຂອງຜູ້ເຂົ້າຮ່ວມ" ແລະ "ສັນຍາເປັນລາຍລັກອັກສອນ ຫຼື ຂໍ້ຕົກລົງເປັນລາຍລັກອັກສອນອື່ນໆ ກັບ ຜູ້ເຂົ້າຮ່ວມທັງຫມົດ" ອາດຈະເພິ່ງພໍໃຈໂດຍຄຳຫມັ້ນສັນຍາ ແລະ ຂໍ້ຕົກລົງເປັນລາຍລັກອັກສອນຂອງອົງການຈັດຕັ້ງ ຫຼື ກຸ່ມທີ່ມີຢູ່ແລ້ວ ຫຼື ການມີສ່ວນຮ່ວມຂອງສະມາຊິກ, ເຊັ່ນ: ເຈົ້າຂອງປ່າໄມ້ / ສະມາຄົມຂອງຜູ້ຈັດການ, ແຜນງານການຄຸ້ມຄອງປ່າໄມ້ແບບຍືນຍົງ (SFM) ແລະ ການຍື່ນສະເຫນີຕໍ່ແຜນງານພາສີ, ບ່ອນທີ່ການຈັດຕັ້ງສາມາດສະແດງໃຫ້ເຫັນວ່າມັນມີຫນ້າທີ່ທາງດ້ານກົດຫມາຍເພື່ອເປັນຕົວແທນຂອງຜູ້ເຂົ້າຮ່ວມ ແລະ ບ່ອນທີ່ຄຳຫມັ້ນສັນຍາ ແລະ ຂໍ້ກຳນົດ ແລະ ເງື່ອນໄຂຂອງສັນຍາມີຜົນບັງຄັບໃຊ້.

ຍ) ເພື່ອໃຫ້ຜູ້ເຂົ້າຮ່ວມທຸກຄົນມີເອກະສານຢັ້ງຢືນການມີສ່ວນຮ່ວມໃນການຢັ້ງຢືນປ່າໄມ້ແບບກຸ່ມ;

ດ) ເພື່ອໃຫ້ຜູ້ເຂົ້າຮ່ວມທຸກຄົນມີຂໍ້ມູນຂ່າວສານ ແລະ ຄຳແນະນຳທີ່ຈຳເປັນສຳລັບການຈັດຕັ້ງປະຕິບັດ ແລະ ການບຳລຸງຮັກສາມາດຕະຖານການຄຸ້ມຄອງປ່າໄມ້ແບບຍືນຍົງ ແລະ ຂໍ້ກຳນົດອື່ນໆທີ່ກ່ຽວຂ້ອງຂອງລະບົບການຢັ້ງຢືນປ່າໄມ້ຢ່າງມີ ປະສິດທິຜົນ;

ຕ) ເພື່ອແກ້ໄຂຄວາມບໍ່ສອດຄ່ອງທີ່ໄດ້ລາຍງານຈາກສະມາຊິກກຸ່ມທີ່ຖືກກຳນົດພາຍໃຕ້ການຢັ້ງຢືນ PEFC ອື່ນໆ ນອກເໜືອໄປຈາກການຢັ້ງຢືນແບບກຸ່ມໂດຍສະເພາະ ແລະ ເພື່ອຮັບປະກັນການປະຕິບັດກັບສະມາຊິກກຸ່ມທັງຫມົດ;

ຖ) ເພື່ອດຳເນີນແຜນງານການຕິດຕາມກວດກາພາຍໃນທີ່ໃຫ້ມີການຕີລາຄາປະເມີນຜົນຄວາມສອດຄ່ອງຂອງຜູ້ເຂົ້າຮ່ວມກັບຂໍ້ກຳນົດການຢັ້ງຢືນ;

ທ) ເພື່ອດຳເນີນແຜນງານການກວດສອບພາຍໃນປະຈຳປີທີ່ກວມເອົາທັງສະມາຊິກກຸ່ມ ແລະ ໜ່ວຍງານກຸ່ມ;

ນ) ເພື່ອດຳເນີນການທົບທວນຄືນການຢັ້ງຢືນປ່າໄມ້ແບບກຸ່ມແລະປະຕິບັດຕາມຜົນໄດ້ຮັບຈາກການທົບທວນ;

ບ) ເພື່ອໃຫ້ການຮ່ວມມືຢ່າງເຕັມທີ່ ແລະ ຄວາມຊ່ວຍເຫຼືອໃນການຕອບສະໜອງຢ່າງມີປະສິດທິພາບຕໍ່ກັບຄຳຮ້ອງຂໍທັງໝົດຈາກອົງການການຢັ້ງຢືນ, ອົງການຮັບຮອງ, PEFC ສາກົນ ຫຼື ຄະນະກຳມະການຄຸ້ມຄອງແຫ່ງຊາດ ສຳລັບຂໍ້ມູນທີ່ກ່ຽວຂ້ອງ, ເອກະສານບັນທຶກ ຫຼື ຂໍ້ມູນຂ່າວສານອື່ນໆ; ອະນຸຍາດໃຫ້ເຂົ້າຫາພື້ນທີ່ປ່າໄມ້ທີ່ຄຸ້ມຄອງໂດຍການຈັດຕັ້ງກຸ່ມ ແລະ ສິ່ງອຳນວຍຄວາມສະດວກອື່ນໆ, ບໍ່ວ່າຈະເປັນທີ່ກ່ຽວຂ້ອງກັບການກວດສອບ ຫຼື ການທົບທວນຢ່າງເປັນທາງການ ຫຼື ທີ່ກ່ຽວຂ້ອງ ຫຼື ມີຜົນສະທ້ອນຕໍ່ລະບົບການຄຸ້ມຄອງ.

### 5.1.2 ໜ້າທີ່ ແລະ ຄວາມຮັບຜິດຊອບຂອງຜູ້ເຂົ້າຮ່ວມ

ມາດຕະຖານ ຕ້ອງການໃຫ້ມີການກຳນົດຫນ້າທີ່ ແລະ ຄວາມຮັບຜິດຊອບຂອງຜູ້ເຂົ້າຮ່ວມ ດັ່ງນີ້:

ກ) ເພື່ອໃຫ້ຂໍ້ຕົກລົງທີ່ເປັນລາຍລັກອັກສອນແກ່ໜ່ວຍງານກຸ່ມ, ລວມທັງຄຳໝັ້ນສັນຍາທີ່ສອດຄ່ອງກັບມາດຕະຖານ ການຄຸ້ມຄອງປ່າໄມ້ແບບຍືນຍົງ ແລະ ຂໍ້ກຳນົດອື່ນໆຂອງລະບົບການຢັ້ງຢືນປ່າໄມ້; ຜູ້ເຂົ້າຮ່ວມກຸ່ມທີ່ຖືກແຍກອອກຈາກກຸ່ມການຢັ້ງຢືນໃດນຶ່ງບໍ່ສາມາດສະໝັກເປັນສະມາຊິກກຸ່ມໄດ້ພາຍໃນ 12 ເດືອນຫຼັງຈາກຖືກຍົກເລີກ;

*ໝາຍເຫດ:* ຂໍ້ກຳນົດສຳລັບ "ຂໍ້ຕົກລົງທີ່ເປັນລາຍລັກອັກສອນ" ແລະ "ຄຳຫມັ້ນສັນຍາ" ຂອງຜູ້ເຂົ້າຮ່ວມ ແມ່ນໄດ້ຮັບຄວາມພໍໃຈໃນຄຳຫມັ້ນສັນຍາ ແລະ ຂໍ້ຕົກລົງລາຍລັກອັກສອນຂອງການຈັດຕັ້ງ ຫຼື ກຸ່ມທີ່ມີຢູ່ແລ້ວ ຫຼື ການມີສ່ວນຮ່ວມຂອງສະມາຊິກ ເຊັ່ນ: ສະມາຄົມເຈົ້າຂອງ / ຜູ້ຈັດການປ່າໄມ້, ໂຄງການຄຸ້ມຄອງປ່າໄມ້ແບບຍືນຍົງ (SFM) ແລະ ການຍື່ນສະເຫນີແຜນງານພາສີ, ຊຶ່ງການຈັດຕັ້ງສາມາດສະແດງໃຫ້ເຫັນວ່າມີອຳນາດຫນ້າທີ່ຕາມກົດຫມາຍໃນ ການເປັນຕົວແທນຂອງຜູ້ເຂົ້າຮ່ວມ ແລະ ຄຳຫມັ້ນສັນຍາ ແລະ ຂໍ້ກຳນົດ ແລະ ເງື່ອນໄຂຂອງສັນຍາມີຜົນບັງຄັບໃຊ້.

ຂ) ເພື່ອໃຫ້ຂໍ້ມູນແກ່ໜ່ວຍງານກຸ່ມ ກ່ຽວກັບການມີສ່ວນຮ່ວມຂອງກຸ່ມກ່ອນໜ້ານີ້;

ຄ) ເພື່ອປະຕິບັດຕາມມາດຕະຖານການຄຸ້ມຄອງປ່າໄມ້ແບບຍືນຍົງ ແລະ ຂໍ້ກຳນົດອື່ນໆຂອງລະບົບການຢັ້ງຢືນຕະຫຼອດຈົນເຖິງຂໍ້ກຳນົດຂອງລະບົບການຄຸ້ມຄອງ;

ງ) ເພື່ອໃຫ້ການຮ່ວມມືຢ່າງເຕັມທີ່ ແລະ ຄວາມຊ່ວຍເຫຼືອໃນການຕອບສະໜອງຢ່າງມີປະສິດທິພາບຕໍ່ຄຳຮ້ອງຂໍທັງໝົດ ຈາກໜ່ວຍງານກຸ່ມ ຫຼື ອົງການຢັ້ງຢືນ ສຳລັບຂໍ້ມູນທີ່ກ່ຽວຂ້ອງ, ເອກະສານບັນທຶກ ຫຼື ຂໍ້ມູນຂ່າວສານອື່ນໆ; ອະນຸຍາດໃຫ້ເຂົ້າເຖິງປ່າໄມ້ ແລະ ສິ່ງອຳນວຍຄວາມສະດວກອື່ນໆ, ບໍ່ວ່າຈະມີຄວາມກ່ຽວຂ້ອງກັບການກວດສອບ ຫຼື ການທົບທວນຢ່າງເປັນທາງການ ຫຼື ທີ່ມີການກ່ຽວຂ້ອງ ຫຼື ມີຜົນສະທ້ອນຕໍ່ລະບົບການຄຸ້ມຄອງ;

ຈ) ເພື່ອແຈ້ງໃຫ້ໜ່ວຍງານກຸ່ມກ່ຽວກັບການວິນິໃສເຫັນຄວາມບໍ່ສອດຄ່ອງພາຍໃຕ້ການຢັ້ງຢືນ PEFC ອື່ນໆ ນອກເໜືອໄປຈາກການຢັ້ງຢືນແບບກຸ່ມສະເພາະ;

ສ) ເພື່ອປະຕິບັດການແກ້ໄຂ ແລະ ການປ້ອງກັນທີ່ກ່ຽວຂ້ອງ ຊຶ່ງສ້າງຕັ້ງຂຶ້ນໂດຍໜ່ວຍງານກຸ່ມ

### 5.2 ຄຳໝັ້ນສັນຍາ ແລະ ນະໂຍບາຍ

**5.2.1** ມາດຕະຖານກຳນົດໃຫ້ໜ່ວຍງານກຸ່ມຕ້ອງໃຫ້ຄຳໝັ້ນສັນຍາ ຄື:

ກ) ປະຕິບັດຕາມມາດຕະຖານການຄຸ້ມຄອງປ່າໄມ້ແບບຍືນຍົງ ແລະ ຂໍ້ກຳນົດອື່ນໆຂອງລະບົບການຢັ້ງຢືນ;
ຂ) ໃຫ້ສົບຊ້ອນຂໍ້ກຳນົດການຢັ້ງຢືນແບບກຸ່ມເຂົ້າໄປໃນລະບົບການຄຸ້ມຄອງກຸ່ມ;
ຄ) ປັບປຸງລະບົບການຄຸ້ມຄອງກຸ່ມຢ່າງຕໍ່ເນື່ອງ;
ງ) ເພື່ອສົ່ງເສີມຜູ້ເຂົ້າຮ່ວມຊ່ວຍປັບປຸງການຄຸ້ມຄອງທີ່ດິນ/ປ່າໄມ້ແບບຍືນຍົງຢ່າງຕໍ່ເນື່ອງ.

**5.2.2** ຄຳໜັ້ນສັນຍາຂອງໜ່ວຍງານກຸ່ມ ອາດຈະເປັນສ່ວນຫນຶ່ງຂອງນະໂຍບາຍການຄຸ້ມຄອງກຸ່ມ ແລະ ຈະເປີດເຜີຍຂໍ້ມູນບັນທຶກຕໍ່ສາທາລະນະ ເມື່ອມີຄຳຮ້ອງຂໍ.

**5.2.3** ມາດຕະຖານກຳນົດໃຫ້ຜູ້ເຂົ້າຮ່ວມຕ້ອງໃຫ້ຄຳໜັ້ນສັນຍາ

ກ) ປະຕິບັດຕາມກົດລະບຽບຂອງລະບົບການຄຸ້ມຄອງ;
ຂ) ເພື່ອນຳເອົາຂໍ້ກຳນົດຂອງມາດຕະຖານຄວາມຍືນຍົງໄປຈັດຕັ້ງປະຕິບັດໃນເຂດພື້ນທີ່ຂອງຕົນ.

## 6. ການວາງແຜນ

**6.1** ມາດຕະຖານກຳນົດວ່າຖ້າການຈັດຕັ້ງກຸ່ມວາງແຜນການປ່ຽນແປງໃດໆໃນລະບົບການຄຸ້ມຄອງກຸ່ມ, ການປ່ຽນແປງເຫຼົ່ານີ້ຈະຖືກລວມເຂົ້າໃນແຜນການຄຸ້ມຄອງກຸ່ມ.

**6.2** ມາດຕະຖານກຳນົດວ່າ ຖ້າໜ່ວຍງານກຸ່ມໜຶ່ງ ຕັດສິນໃຈຈະປະຕິບັດຕາມຂໍ້ກຳນົດຂອງມາດຕະຖານການຄຸ້ມຄອງປ່າໄມ້ແບບຍືນຍົງໃນລະດັບກຸ່ມ, ຂໍ້ກຳນົດເຫຼົ່ານີ້ຈະຖືກພິຈາລະນາເຂົ້າໃນແຜນການຄຸ້ມຄອງກຸ່ມ.

## 7. ການສະໜັບສະໜູນ

**7.1** ມາດຕະຖານ ຕ້ອງການໃຫ້ມີການກຳນົດ ແລະ ຈັດຫາຊັບພະຍາກອນທີ່ຈຳເປັນສຳລັບການສ້າງຕັ້ງ, ການຈັດຕັ້ງປະຕິບັດ, ບຳລຸງຮັກສາ ແລະ ການປັບປຸງຢ່າງຕໍ່ເນື່ອງຂອງລະບົບການຄຸ້ມຄອງກຸ່ມ.

**7.2** ມາດຕະຖານຈະກຳນົດຄວາມສາມາດທີ່ຈຳເປັນຂອງບຸກຄົນທີ່ເຮັດວຽກຢູ່ໃນລະບົບການຄຸ້ມຄອງກຸ່ມ.

**7.3** ມາດຕະຖານກຳນົດໃຫ້ຕ້ອງມີຂະບວນການສື່ສານ ເພື່ອປູກຈິດສຳນຶກຂອງຜູ້ເຂົ້າຮ່ວມ ກ່ຽວກັບ:

ກ) ນະໂຍບາຍການຄຸ້ມຄອງກຸ່ມ;

ຂ) ຂໍ້ກຳນົດຂອງມາດຕະຖານການຄຸ້ມຄອງປ່າໄມ້ແບບຍືນຍົງ;

ຄ) ການມີສ່ວນຮ່ວມຕໍ່ກັບປະສິດທິພາບຂອງລະບົບການຄຸ້ມຄອງກຸ່ມ ແລະ ການຄຸ້ມຄອງປ່າໄມ້ແບບຍືນຍົງ, ລວມທັງຜົນປະໂຫຍດຂອງການປັບປຸງການປະຕິບັດຂອງກຸ່ມ;

ງ) ຜົນສະທ້ອນຂອງການບໍ່ປະຕິບັດຕາມຂໍ້ກຳນົດຂອງລະບົບການຄຸ້ມຄອງກຸ່ມ.

**7.4** ມາດຕະຖານ ຕ້ອງການໃຫ້ມີການກຳນົດການສື່ສານພາຍໃນ ແລະ ພາຍນອກ ທີ່ກ່ຽວຂ້ອງກັບລະບົບການຄຸ້ມຄອງກຸ່ມ. ປະກອບມີ:

ກ) ສິ່ງທີ່ຈະຕິດຕໍ່ສື່ສານ;

ຂ) ເວລາທີ່ຈະຕິດຕໍ່ສື່ສານ;

ຄ) ບຸກຄົນທີ່ຈະຕິດຕໍ່ສື່ສານ;

ງ) ວິທີການສື່ສານ.

**7.5** ມາດຕະຖານກຳນົດໃຫ້ຕ້ອງມີກົນໄກທີ່ເໝາະສົມເພື່ອແກ້ໄຂຄຳຮ້ອງທຸກ ແລະ ຂໍ້ຂັດແຍ່ງກ່ຽວກັບການຄຸ້ມຄອງ ກຸ່ມ ແລະ ການດຳເນີນງານການຄຸ້ມຄອງປ່າໄມ້ແບບຍືນຍົງ.

**7.6** ມາດຕະຖານກຳນົດໃຫ້ຂໍ້ມູນບັນທຶກທີ່ກ່ຽວຂ້ອງກັບລະບົບການຄຸ້ມຄອງກຸ່ມ ແລະ ຄວາມສອດຄ່ອງກັບຂໍ້ກຳນົດຂອງມາດຕະຖານການຄຸ້ມຄອງປ່າໄມ້ແບບຍືນຍົງ, ຄື:

ກ) ທັນກັບສະພາບການປະຈຸບັນ;

ຂ) ພ້ອມໃຊ້ງານ ແລະ ເໝາະສົມສຳລັບການນຳໃຊ້ ໃນສະຖານທີ່ ແລະ ເວລາທີ່ມີຄວາມຈຳເປັນ;

ຄ) ໄດ້ຮັບການປົກປ້ອງຢ່າງເໝາະສົມຈາກການສູນເສຍຄວາມລັບ, ການນຳໃຊ້ທີ່ບໍ່ຖືກຕ້ອງ ຫຼື ການສູນເສຍຄວາມຊື່ສັດ.

# 8. ການດຳເນີນງານ

8.1 ມາດຕະຖານກຳນົດໃຫ້ການຈັດຕັ້ງກຸ່ມຕ້ອງວາງແຜນ, ນຳໄປປະຕິບັດ ແລະ ຄວບຄຸມຂະບວນການທີ່ຈຳເປັນ:

ກ) ເພື່ອໃຫ້ສອດຄ່ອງກັບຂໍ້ກຳນົດຂອງມາດຕະຖານການຢັ້ງຢືນແບບກຸ່ມ ແລະ ມາດຕະຖານການຄຸ້ມຄອງປ່າໄມ້ແບບຍືນຍົງ ແລະ

ຂ) ຈັດຕັ້ງປະຕິບັດແຜນວຽກທີ່ໄດ້ກຳນົດໄວ້ໃນຂໍ້ 6.

8.2 ມາດຕະຖານກຳນົດໃຫ້ການວາງແຜນ, ການຈັດຕັ້ງປະຕິບັດ ແລະ ການຄວບຄຸມ ຈະຕ້ອງເຮັດໂດຍ:

ກ) ການກຳນົດຂະບວນການທີ່ຈຳເປັນ ແລະ ການກຳນົດສ້າງເງື່ອນໄຂສຳລັບສິ່ງເຫຼົ່ານັ້ນ;

ຂ) ຈັດຕັ້ງປະຕິບັດການຄວບຄຸມຂະບວນການຕາມເງື່ອນໄຂ;

ຄ) ຮັກສາຂໍ້ມູນບັນທຶກໃນຂອບເຂດທີ່ຈຳເປັນ ເພື່ອໃຫ້ມີຄວາມໝັ້ນໃຈວ່າຂະບວນການຕ່າງໆ ໄດ້ຖືກປະຕິບັດຕາມແຜນ ການທີ່ວາງໄວ້.

# 9. ການຕີລາຄາປະເມີນຜົນການຈັດຕັ້ງປະຕິບັດ

## 9.1 ການຕິດຕາມ, ມາດຕະການ, ວິເຄາະ ແລະ ຕີລາຄາປະເມີນຜົນ

**9.1.1** ມາດຕະຖານກຳນົດໃຫ້ແຜນງານການຕິດຕາມພາຍໃນຢ່າງຕໍ່ເນື່ອງ ສ້າງຄວາມໝັ້ນໃຈໃນຄວາມສອດຄ່ອງຂອງການຈັດຕັ້ງກຸ່ມກັບມາດຕະຖານການຄຸ້ມຄອງປ່າໄມ້ແບບຍືນຍົງ, ໂດຍສະເພາະແມ່ນຈະຕ້ອງກຳນົດ:

ກ) ສິ່ງທີ່ຕ້ອງຕິດຕາມ ແລະ ວັດແທກ;

ຂ) ວິທີການຕິດຕາມກວດກາ, ມາດຕະການ, ການວິເຄາະ ແລະ ການປະເມີນຜົນ ຕາມຄວາມເໝາະສົມ ເພື່ອຮັບປະກັນຜົນຮັບທີ່ຖືກຕ້ອງ;

ຄ) ເວລາປະຕິບັດການຕິດຕາມ ແລະ ກວດກາ;

ງ) ເວລາວິເຄາະ ແລະ ຕີລາຄາຜົນໄດ້ຮັບຈາກການຕິດຕາມ ແລະ ກວດກາ;

ຈ) ປະເພດຂໍ້ມູນບັນທຶກ ທີ່ຈະຕ້ອງມີເພື່ອເປັນຫຼັກຖານຂອງຜົນໄດ້ຮັບ.

**9.1.2** ມາດຕະຖານກຳນົດໃຫ້ໜ່ວຍງານກຸ່ມ ຕ້ອງຕີລາຄາປະເມີນຜົນການດຳເນີນງານການຄຸ້ມຄອງກຸ່ມ ແລະ ປະສິດທິຜົນຂອງລະບົບການຄຸ້ມຄອງກຸ່ມ ກ່ຽວກັບການຈັດຕັ້ງປະຕິບັດຕາມຂໍ້ກຳນົດການຄຸ້ມຄອງປ່າໄມ້ ແບບຍືນຍົງ.

## 9.2 ການກວດສອບພາຍໃນ

### 9.2.1 ຈຸດປະສົງ

9.2.1.1 ມາດຕະຖານກຳນົດໃຫ້ແຜນງານການກວດສອບພາຍໃນປະຈຳປີ ຕ້ອງໃຫ້ມີຂໍ້ມູນກ່ຽວກັບວ່າລະບົບການຄຸ້ມຄອງຈັດສັນກຸ່ມ:

ກ) ຄວາມສອດຄ່ອງ

i. ຂໍ້ກຳນົດຂອງການຈັດຕັ້ງກຸ່ມສຳລັບລະບົບການຄຸ້ມຄອງກຸ່ມ;

ii. ຂໍ້ກຳນົດຂອງມາດຕະຖານການຢັ້ງຢືນແບບກຸ່ມ/ກຸ່ມແຫ່ງຊາດ;

ຂ) ຜູ້ເຂົ້າຮ່ວມໄດ້ຮັບປະກັນການຈັດຕັ້ງປະຕິບັດມາດຕະຖານການຄຸ້ມຄອງປ່າໄມ້ແບບຍືນຍົງ;

ຄ) ຖືກນຳໄປປະຕິບັດ ແລະ ບຳລຸງຮັກສາໄວ້ຢ່າງມີປະສິດທິຜົນ.

9.2.1.2 ມາດຕະຖານກຳນົດໃຫ້ແຜນງານການກວດສອບພາຍໃນຈະຕ້ອງກວມເອົາໜ່ວຍງານກຸ່ມ ແລະ ຜູ້ເຂົ້າຮ່ວມກຸ່ມທັງໝົດ. ໜ່ວຍງານກຸ່ມຈະໄດ້ຖືກກວດສອບເປັນປະຈຳທຸກໆປີ ຊຶ່ງຜູ້ເຂົ້າຮ່ວມອາດຈະຖືກຄັດເລືອກເພື່ອເປັນຕົວຢ່າງ.

### 9.2.2ການຈັດຕັ້ງ

ມາດຕະຖານກຳນົດໃຫ້ມີແຜນງານການກວດສອບພາຍໃນ, ຊຶ່ງຢ່າງໜ້ອຍ ປະກອບມີ:

ກ) ການວາງແຜນ, ເຮັດໃຫ້ເກີດຂຶ້ນ, ການຈັດຕັ້ງປະຕິບັດ ແລະ ບຳລຸງຮັກສາແຜນງານການກວດສອບ ລວມທັງຄວາມ ຖີ່, ວິທີການ, ຄວາມຮັບຜິດຊອບ, ຂໍ້ກຳນົດໃນການວາງແຜນ ແລະ ການລາຍງານ, ຊຶ່ງຈະຕ້ອງຄຳນຶງເຖິງຄວາມສຳຄັນຂອງຂະບວນການທີ່ກ່ຽວຂ້ອງ ແລະ ຜົນຂອງການກວດສອບຜ່ານມາ;

ຂ) ຄຳນິຍາມຂອງເງື່ອນໄຂການກວດສອບ ແລະ ຂອບເຂດສຳລັບການກວດສອບແຕ່ລະຄັ້ງ;

ຄ) ຄວາມສາມາດຂອງຜູ້ກວດສອບພາຍໃນ (ຄວາມຮູ້ດ້ານປ່າໄມ້, ຄວາມຮູ້ດ້ານມາດຕະຖານ);

ງ) ການຄັດເລືອກຜູ້ກວດສອບ ແລະ ດຳເນີນການກວດສອບ ເພື່ອຮັບປະກັນໄດ້ຈຸດປະສົງ ແລະ ຄວາມເປັນກາງຂອງຂະບວນ ການກວດສອບ;

ຈ) ຮັບປະກັນວ່າຜົນໄດ້ຮັບຂອງການກວດສອບໄດ້ຖືກລາຍງານໃຫ້ຝ່າຍຄຸ້ມຄອງກຸ່ມທີ່ກ່ຽວຂ້ອງ;

ສ) ການເກັບຮັກສາຂໍ້ມູນບັນທຶກໄວ້ເປັນຫຼັກຖານຂອງການຈັດຕັ້ງປະຕິບັດຕາມແຜນງານການກວດສອບ ແລະ ຜົນ ການກວດສອບ.

## 9.3 ການຄັດເລືອກຜູ້ເຂົ້າຮ່ວມໃນແຜນງານການກວດສອບພາຍໃນ

### 9.3.1 ສະພາບລວມ

9.3.1.1 ມາດຕະຖານກຳນົດໃຫ້ມີການສ້າງຂໍ້ກຳນົດ ເພື່ອຄັດເລືອກຜູ້ເຂົ້າຮ່ວມໃນແຜນງານການກວດສອບພາຍໃນ. ຂໍ້ກຳນົດເຫຼົ່ານີ້ຈະປະກອບມີຂັ້ນຕອນດັ່ງຕໍ່ໄປນີ້ ຄື:

ກ) ການກຳນົດຂະໜາດຕົວຢ່າງ (9.3.2);

ຂ) ການກຳນົດປະເພດຕົວຢ່າງ (9.3.3);

ຄ) ການແຈກຢາຍຕົວຢ່າງເຂົ້າຕາມປະເພດ (9.3.4);

ງ) ການຄັດເລືອກຜູ້ເຂົ້າຮ່ວມ (9.3.5).

9.3.1.2 ມາດຕະຖານອາດຈະບັນຍັດຂໍ້ກຳນົດເພີ່ມເຕີມກ່ຽວກັບພາກພື້ນ, ລະດັບຊາດ ຫຼື ຂະແໜງການຂັ້ນສູນກາງ.

9.3.1.3 ມາດຕະຖານຈະຕ້ອງບັນຍັດຂໍ້ກຳນົດໃນການສຸ່ມຕົວຢ່າງເພີ່ມເຕີມ ໃນກໍລະນີຂອງການມີສ່ວນຮ່ວມຂອງການຈັດຕັ້ງ ຫຼື ກຸ່ມ ຫຼື ການມີສ່ວນຮ່ວມຂອງສະມາຊິກເຊັ່ນ: ສະມາຄົມເຈົ້າຂອງ / ຜູ້ຈັດການປ່າໄມ້, ແຜນງານຄຸ້ມຄອງປ່າໄມ້ແບບຍືນຍົງ (SFM) ແລະ ການຍື່ນສະເໜີແຜນງານພາສີ ທີ່ມີສະມາຊິກຂອງຕົນເອງ.

### 9.3.2 ການກຳນົດຂະໜາດຕົວຢ່າງ

9.3.2.1 ຂະໜາດຕົວຢ່າງຈະຖືກຄິດໄລ່ສຳລັບຜູ້ເຂົ້າຮ່ວມຂອງການຈັດຕັ້ງກຸ່ມ.

9.3.2.2 ຂະໜາດຂອງຕົວຢ່າງໂດຍທົ່ວໄປຄວນຈະເປັນຮາກຂັ້ນສອງຂອງຈຳນວນຜູ້ເຂົ້າຮ່ວມ: ($y=\sqrt{x}$), ໂດຍປັດເສດເປັນຈຳນວນຕົວເລກມົນ.

9.3.2.3 ຂະໜາດຂອງຕົວຢ່າງອາດຈະຖືກດັດແປງໄດ້ໂດຍມາດຕະຖານ ໂດຍໃຫ້ຄຳນຶງເຖິງໂຕຊີ້ວັດ ຕັ້ງແຕ່ໜຶ່ງໂຕຂຶ້ນໄປ:

ກ) ຜົນໄດ້ຮັບຂອງການປະເມີນຄວາມສ່ຽງ ໃນກໍລະນີນີ້ຕ້ອງກຳນົດຄ່າຜິດດ່ຽງຂອງຂະໜາດຕົວຢ່າງ ຊຶ່ງໃນກໍລະນີທີ່ມີຄວາມສ່ຽງຕ່ຳ ຫຼື ສູງ ສຳລັບແຕ່ລະປະເພດ;

ຂ) ຜົນໄດ້ຮັບຂອງການກວດສອບພາຍໃນ ຫຼື ການກວດສອບການຢັ້ງຢືນທີ່ຜ່ານມາ;

ຄ) ຄຸນນະພາບ / ລະດັບຄວາມໜັ້ນໃຈຂອງແຜນງານການຕິດຕາມກວດກາພາຍໃນ;

ງ) ການນຳໃຊ້ເຕັກໂນໂລຢີ ທີ່ຊ່ວຍໃຫ້ສາມາດເກັບກຳຂໍ້ມູນທີ່ກ່ຽວຂ້ອງກັບຂໍ້ກຳນົດທີ່ລະບຸໄວ້;

*ໝາຍເຫດ:* ເຕັກໂນໂລຢີດັ່ງກ່າວ ອາດຈະເປັນ ເຊັ່ນ: ການນຳໃຊ້ຂໍ້ມູນພາບຖ່າຍດາວທຽມ ຫຼື ໂດຼນ (drones) ແລະ ອະນຸຍາດໃຫ້ມີຄຳຖະແຫຼງການປະຕິບັດຕາມຂໍ້ກຳນົດສະເພາະຂອງມາດຕະຖານຄວາມຍືນຍົງ ຫຼື ສະໜັບສະໜູນການເກັບຕົວຢ່າງຄວາມສ່ຽງ.

ຈ) ຂຶ້ນຢູ່ກັບວິທີການອື່ນໆຂອງການເກັບກຳຂໍ້ມູນກ່ຽວກັບກິດຈະກຳໃນຮາກຖານ.

*ໝາຍເຫດ:* ວິທີໜຶ່ງອາດຈະເປັນການສຳຫຼວດກັບຜູ້ເຂົ້າຮ່ວມທີ່ໃຫ້ຂໍ້ມູນບາງຢ່າງກ່ຽວກັບກິດຈະກຳຂອງເຂົາເຈົ້າ ຢູ່ໃນຮາກຖານ.

### 9.3.3 ການກຳນົດປະເພດຕົວຢ່າງ

9.3.3.1 ປະເພດຕົວຢ່າງຈະຕ້ອງກຳນົດຂຶ້ນໂດຍອີງໃສ່ຜົນຂອງການປະເມີນຄວາມສ່ຽງ. ຕົວຊີ້ວັດທີ່ໃຊ້ໃນການປະເມີນຄວາມສ່ຽງຈະຕ້ອງສ່ອງແສງເຖິງຂອບເຂດທາງພູມສາດຂອງມາດຕະຖານ. ບັນຊີລາຍຊື່ຕົວຊີ້ວັດທີ່ບໍ່ຄົບຖ້ວນຕໍ່ໄປນີ້ ອາດຈະຖືກນຳໃຊ້ສຳລັບການປະເມີນຄວາມສ່ຽງ

ກ) ປະເພດກຳມະສິດ (ເຊັ່ນ: ປ່າໄມ້ຂອງລັດ, ປ່າຊຸມຊົນ, ປ່າໄມ້ເອກະຊົນ);

ຂ) ຂະໜາດຂອງໜ່ວຍງານຄຸ້ມຄອງ (ຂຶ້ນຫ້ອງຮຽນຂະໜາດທີ່ແຕກຕ່າງກັນ);

ຄ) ເຂດຊີວະພູມສາດ (ເຊັ່ນ: ເຂດທົ່ງພຽງ, ພູຕ່ຳ, ພູສູງ);

ງ) ການດຳເນີນງານ, ຂະບວນການ ແລະ ໝາກຜົນຂອງຜູ້ມີໂອກາດເຂົ້າຮ່ວມກຸ່ມ;

ຈ) ການທຳລາຍປ່າໄມ້ ແລະ ການຫັນປ່ຽນປ່າໄມ້;

ສ) ໄລຍະເວລາການໝູນວຽນ;

ຊ) ຄວາມອຸດົມສົມບູນຂອງຄວາມຫຼາກຫຼາຍທາງຊີວະນາໆພັນ;

ຍ) ບົດບາດໜ້າທີ່ຂອງປ່າໄມ້ໃນທາງເສດຖະກິດ-ສັງຄົມ ແລະ ການພັກຜ່ອນຢ່ອນອາລົມ;

ດ) ການເພິ່ງພາອາໄສ ແລະ ການພົວພັນກົມກຽວກັບຊຸມຊົນທ້ອງຖິ່ນ ແລະ ຄົນພື້ນເມືອງ;

ຕ) ຊັບພະຍາກອນທີ່ມີຢູ່ສຳລັບການບໍລິຫານ, ການດຳເນີນງານ, ການຝຶກອົບຮົມ ແລະ ການຄົ້ນຄວ້າວິທະຍາສາດ;

ຖ) ການປົກຄອງ ແລະ ການບັງຄັບໃຊ້ກົດໝາຍ.

9.3.3.2 ເງື່ອນໄຂທີ່ກໍ່ໃຫ້ເກີດຄວາມສ່ຽງຕໍ່ແຕ່ລະຕົວຊີ້ວັດໃນລະດັບຕ່ຳ, ປານກາງ ແລະ ສູງ ແລະ ຜົນທີ່ເກີດຕາມມາຂອງການເກັບຕົວຢ່າງຈະຕ້ອງໄດ້ຖືກກຳນົດໄວ້.

### 9.3.4 ການແຈກຢາຍຕົວຢ່າງ

ຕົວຢ່າງຈະຖືກແບ່ງປະເພດຕົວຢ່າງຕາມຜົນຂອງການປະເມີນຄວາມສ່ຽງ.

### 9.3.5 ການຄັດເລືອກຜູ້ເຂົ້າຮ່ວມ

9.3.5.1 ຄວນສຸ່ມເລືອກຕົວຢ່າງ 25% ເປັນຢ່າງຕ່ຳ.

9.3.5.2 ຈະຕ້ອງກຳນົດຂັ້ນຕອນການຄັດເລືອກຜູ້ເຂົ້າຮ່ວມຕາມຄວາມສ່ຽງ.

## 9.4 ການທົບທວນຄືນການຄຸ້ມຄອງ

**9.4.1** ມາດຕະຖານກຳນົດໃຫ້ມີການທົບທວນການຄຸ້ມຄອງປະຈຳປີ ຊຶ່ງຢ່າງໜ້ອຍອາດຈະປະກອບມີ:

ກ) ສະຖານະພາບຂອງການດຳເນີນງານຈາກການທົບທວນຄືນການຄຸ້ມຄອງທີ່ຜ່ານມາ;

ຂ) ການປ່ຽນແປງໃນປະເດັນພາຍນອກ ແລະ ພາຍໃນທີ່ກ່ຽວຂ້ອງກັບລະບົບການຄຸ້ມຄອງກຸ່ມ;

ຄ) ສະຖານະພາບຂອງຄວາມສອດຄ່ອງກັບມາດຕະຖານການຄຸ້ມຄອງປ່າໄມ້ແບບຍືນຍົງ, ຊຶ່ງລວມມີການທົບທວນ ຄືນຜົນໄດ້ຮັບຂອງແຜນງານການຕິດຕາມພາຍໃນ, ການກວດສອບພາຍໃນ ແລະ ການປະເມີນຜົນ ແລະ ການເຝົ້າລະວັງ ຂອງອົງການຢັ້ງຢືນ;

ງ) ຂໍ້ມູນກ່ຽວກັບຜົນການດຳເນີນຂອງກຸ່ມ ລວມທັງແນວໂນ້ມຕ່າງໆ:

  i. ຄວາມບໍ່ສອດຄ່ອງ ແລະ ການດຳເນີນການແກ້ໄຂ;
  ii. ຜົນການຕິດຕາມ ແລະ ກວດກາ/ວັດແທກ;
  iii. ຜົນການກວດສອບ;

ຈ) ໂອກາດສຳລັບການປັບປຸງຢ່າງຕໍ່ເນື່ອງ.

**9.4.2** ມາດຕະຖານກຳນົດໃຫ້ຜົນໄດ້ຮັບຂອງການທົບທວນການຄຸ້ມຄອງ ຈະປະກອບມີການຕັດສິນໃຈທີ່ກ່ຽວຂ້ອງ ກັບໂອກາດການປັບປຸງຢ່າງຕໍ່ເນື່ອງ ແລະ ຄວາມຈຳເປັນໃນການປ່ຽນແປງລະບົບການຄຸ້ມຄອງກຸ່ມ.

**9.4.3** ມາດຕະຖານກຳນົດໃຫ້ການຈັດຕັ້ງກຸ່ມ ຕ້ອງເກັບຮັກສາຂໍ້ມູນບັນທຶກໄວ້ເປັນຫຼັກຖານຂອງຜົນການທົບທວນການຄຸ້ມຄອງ ຈັດສັນ.

# 10. ການປັບປຸງແກ້ໄຂ

## 10.1 ຄວາມບໍ່ສອດຄ່ອງ ແລະ ການປະຕິບັດການແກ້ໄຂ

**10.1.1** ມາດຕະຖານກຳນົດໃຫ້ເມື່ອມີຄວາມບໍ່ສອດຄ່ອງເກີດຂຶ້ນຕາມຂໍ້ກຳນົດ, ການຈັດຕັ້ງກຸ່ມຈະຕ້ອງ:

ກ) ມີປະຕິກິລິຍາຕໍ່ຄວາມບໍ່ສອດຄ່ອງຕາມຂໍ້ກຳນົດ ແລະ ຕາມເຫັນສົມຄວນ ຄື:

i. ປະຕິບັດການຄວບຄຸມ ແລະ ແກ້ໄຂ;

ii. ຈັດການກັບຜົນສະທ້ອນຕາມມາ;

ຂ) ປະເມີນຄວາມຈຳເປັນຂອງການປະຕິບັດງານເພື່ອລົບລ້າງສາເຫດຂອງຄວາມບໍ່ສອດຄ່ອງຕາມຂໍ້ກຳນົດ, ເພື່ອບໍ່ໃຫ້ມັນເກີດຂຶ້ນອີກ ຫຼື ເກີດຂຶ້ນຢູ່ບ່ອນອື່ນ ໂດຍ:

iii. ທົບທວນຄືນຄວາມບໍ່ສອດຄ່ອງ;

iv. ການກຳນົດສາເຫດຂອງຄວາມບໍ່ສອດຄ່ອງ;

v. ກຳນົດວ່າມີຄວາມບໍ່ສອດຄ່ອງຕາມຂໍ້ກຳນົດທີ່ຄ້າຍຄືກັນ ຫຼື ອາດຈະເກີດຂຶ້ນ;

ຄ) ຈັດຕັ້ງປະຕິບັດແຜນວຽກ ທີ່ຈຳເປັນ;

ງ) ທົບທວນປະສິດທິພາບຂອງການປະຕິບັດການແກ້ໄຂຕາມກໍລະນີ;

ຈ) ສ້າງການປ່ຽນແປງລະບົບການຄຸ້ມຄອງກຸ່ມ, ຖ້າຫາກຈຳເປັນ.

**10.1.2** ມາດຕະຖານກຳນົດໃຫ້ການຈັດຕັ້ງກຸ່ມຕ້ອງເກັບຮັກສາຂໍ້ມູນບັນທຶກໄວ້ເປັນຫຼັກຖານ:

a) ລັກສະນະຂອງຄວາມບໍ່ສອດຄ່ອງຕາມຂໍ້ກຳນົດ ແລະ ການປະຕິບັດການຕາມມາ;

b) ຜົນໄດ້ຮັບຂອງການປະຕິບັດການ.

**10.1.3** ມາດຕະຖານກຳນົດໃຫ້ຜູ້ເຂົ້າຮ່ວມທີ່ຖືກແຍກອອກຈາກການຢັ້ງຢືນແບບກຸ່ມ ຈະຕ້ອງໄດ້ຮັບການກວດສອບ ພາຍໃນໂດຍໜ່ວຍງານກຸ່ມ ກ່ອນທີ່ຈະໄດ້ຖືກອະນຸຍາດໃຫ້ກັບເຂົ້າສູ່ການຢັ້ງຢືນແບບກຸ່ມຄືນໃໝ່. ການກວດສອບພາຍໃນຈະຕ້ອງບໍ່ເກີດຂຶ້ນໄວກວ່າ 12 ເດືອນຫຼັງຈາກຖືກຄັດແຍກອອກຈາກກຸ່ມ.

## 10.2 ການປັບປຸງຢ່າງຕໍ່ເນື່ອງ

ມາດຕະຖານກຳນົດໃຫ້ຕ້ອງມີການປັບປຸງຄວາມເໝາະສົມ, ຄວາມພຽງພໍ ແລະ ປະສິດທິຜົນຂອງລະບົບການຄຸ້ມຄອງກຸ່ມ ແລະ ການ ຄຸ້ມຄອງປ່າໄມ້ແບບຍືນຍົງ ຢ່າງຕໍ່ເນື່ອງ.

## ບັນນານຸກົມ

IAF MD 1, *Mandatory Document for the Certification of Multiple Sites Based on Sampling (IAF MD 1)*

ISO/IEC 17000, *Conformity assessment — Vocabulary and general principles*

ISO/IEC Directives, *Part 1 — Consolidated ISO Supplement — Procedures specific to ISO, Eighth edition, 2017*

ສະພາບໍລິຫານ PEFC

ICC Building C1 Route
de Pré-Bois 20 1215
Geneva 15
Switzerland

**t** +41 22 799 45 40
**f** +41 22 799 45 50
**e** info@pefc.org
www.pefc.org